# ປະກາດຮັບສະໝັກຄູຝຶກ

## ກ່ຽວກັບການສ້າງຄວາມອາດສາມາດ ແລະ ການສະໜັບສະໜູນວິທີການຂຽນແຜນການ/ບົດສະເໜີໂຄງການຂະໜາດນ້ອຍ

**I. ພາລະໜ້າທີ່ຂອງສະມາຄົມເຊດາ**

ສະມາຄົມພັດທະນາກະສິກຳແລະສິ່ງແວດແບບຍືນຍົງ (ສກສຍ) ແມ່ນສະມາຄົມບໍ່ຫວັງຜົນກຳໄລ, ສກສຍ ມີວິໃສທັດເພື່ອອານາຄົດຂອງຊຸມຊົນລາວໃນການປັບປຸງການດຳລົງຊີວິດໃຫ້ດີຂຶ້ນ ແລະ ຍືນຍົງ ທາງດ້ານການຄໍ້າປະກັນດ້ານສະບຽງອາຫານ ແລະ ໂພຊະນາການດ້ວຍການພັດທະນາກະສິກຳ ແລະ ອະນຸລັກສິ່ງແວດລ້ອມ. ສກສຍ ມີພາລະກິດເພື່ອສົ່ງເສີມກະສິກຳແບບຍືນຍົງ, ອາຫານ ແລະ ອະນຸລັກສິ່ງແວດລ້ອມ ດ້ວຍການພັດທະນາຂີດຄວາມສາມາດທາງດ້ານການສ້າງລາຍຮັບທີ່ນຳໃຊ້ວິທີການແບບມີສ່ວນຮ່ວມຂອງຊຸມຊົນທຸກຍາກ ເຊິ່ງປະກອບດ້ວຍຊາວກະສິກອນ, ຜູ້ດ້ອຍໂອກາດ, ແມ່ຍິງ, ຊາວໜຸ່ມ ແລະ ກຸ່ມຊົນເຜົ່າ. ສະມາຄົມໄດ້ມີໂຄງການສົ່ງເສີມກະສິກຳປັບຕົວເຂົ້າກັບອາກາດປ່ຽນແປງ ແລະ ການເຂົ້າເຖິງການຕະຫຼາດເພື່ອຊາວກະສິກອນໜຸ່ມ ແຂວງຫຼວງນໍ້າທາ ແມ່ນໄດ້ຈັດຕັ້ງຢູ່ 4 ບ້ານ ຄື: ບ້ານນໍ້າແງ້ນ, ບ້ານນໍ້າທຸງ, ບ້ານປ່າສັກ ແລະ ປຸ່ງ ເມືອງຫຼວງນໍ້າທາ.

**II. ຄຸນນະວຸດ ແລະ ປະສົບການ**

- ຕ້ອງມີປະສົບການກ່ຽວກັບການຂຽນແຜນໂຄງການ ຫຼື ແຜນກິດຈະກຳ.
- ເຄີຍມີປະສົບການເຮັດວຽກກ່ຽວກັບການພັດທະນາຊຸມຊົນ ແລະ ການເປັນຄູຝຶກ
- ເປັນຄົນສັນຊາດລາວ
- ສາມາດເດີນທາງໄປຕ່າງແຂວງໄດ້ (ແຂວງພາກເໜືອ)
- ມີສຸຂະພາບແຂງແຮງ
- ສາມາດເຮັດວຽກແຕ່ວັນທີ 28-30/04/2025 ເປັນຕົ້ນໄປ

**III. ໜ້າທີ່ຮັບຜິດຊອບຫຼັກ**

- ອອກແບບການຝຶກອົບຮົມຮ່ວມກັບຜູ້ຮັບຜິດຊອບໂຄງການ
- ເປັນຕົວຫຼັກໃນການຝຶກອົບຮົມ ແລະ ອື່ນທີ່ກ່ຽວຂ້ອງ.
- ແນະນຳ, ກວດກາ ການຂຽນແຜນ ຫຼື ບົດສະເໜີໂຄງການ
- ຂຽນບົດລາຍງານຜົນຂອງການຝຶກອົບຮົມໃຫ້ໂຄງການ

**IV. ວັນເວລາ ແລະ ສະຖານທີ່**

ຈຳນວນວັນເຮັດວຽກທັງໝົດ 6 ວັນ: ກະກຽມເອກະສານ 1 ວັນ, ຝຶກອົບຮົມ 4 ວັນ, ຂຽນບົດລາຍງານ 1 ວັນ. ເດີນທາງຈາກວຽງຈັນຫາ ຫຼວງນໍ້າທາ ວັນທີ 27/04/2025, ຝຶກອົບຮົມ ວັນທີ 28-30/04/2025 ຫາ ວັນທີ 01/05/2025 ແລະ ເດີນທາງກັບນະຄອນຫຼວງວຽງຈັນ ວັນທີ 02/05/2025.
ສະຖານທີ່: ເມືອງຫຼວງນໍ້າທາ

ທ່ານໃດສົນໃຈສາມາດຍື່ນຄຳຮ້ອງສະໝັກຂຽນດ້ວຍຕົວເອງ ພ້ອມດ້ວຍ ຊີວະປະຫວັດ. ສະເການ ສົ່ງມາທາງອີແມ໋ວ: infor.saedalaos@gmail.com

**ປິດຮັບສະໝັກ ວັນທີ 25/04/2025**